ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ **2330** /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2025

# ແຈ້ງການ

**ເຖິງ: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າໃນຂອບເຂດທົ່ວປະເທດ.**

**ເລື່ອງ: ການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.**

- ອີງຕາມ ດຳລັດ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2072/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມທິດຊີ້ນຳຂອງທ່ານຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຜູ້ຊີ້ນຳກົມການຄ້າຕ່າງປະເທດ ຄັ້ງວັນທີ 06 ສິງຫາ 2025.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ແລະ ບໍ່ໄດ້ຮັບສິດທິພິເສດ (Certificate of Origin ຫຼື CO) ຂອງບັນດາຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າໃນຂອບເຂດທົ່ວປະເທດ ດັ່ງລາຍລະອຽດລຸ່ມນີ້:

1. ການອອກ CO ທີ່ໄດ້ຮັບສິດທິພິເສດ ແລະ ບໍ່ໄດ້ຮັບສິດທິພິເສດ ແມ່ນໃຫ້ອອກຜ່ານລະບົບເອເລັກໂຕຣນິກ (www.ecolao.gov.la) ພຽງຊ່ອງທາງດຽວ, ຖ້າກໍລະນີເຈົ້າໜ້າທີ່ປະເທດປາຍທາງມີການກວດຄືນແຫຼ່ງກຳເນີດສິນຄ້າຂອງ CO ສະບັບດັ່ງກ່າວທີ່ບໍ່ໄດ້ອອກຜ່ານລະບົບ, ກົມການຄ້າຕ່າງປະເທດ ຈະບໍ່ຮັບຜິດຊອບໃນການຊີ້ແຈງຕໍ່ເຈົ້າໜ້າທີ່ປະເທດປາຍທາງ;
2. ມອບໃຫ້ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ເປັນຜູ້ອອກໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດສິນຄ້າ (CPE) ໃຫ້ທຸກ ບໍລິສັດ/ໂຮງງານ ທີ່ຂໍອອກ CO ນຳບັນດາພະແນກອຸດສາຫະກຳ ແລະ ການຄ້າ ແລະ ສະພາການຄ້າ ແລະ ອຸດສາຫະກຳ ຂັ້ນແຂວງ ແລະ ນະຄອນຫຼວງ;
3. ສະເໜີໃຫ້ຈັດຕັ້ງປະຕິບັດການອອກ CO ຢ່າງເຂັ້ມງວດຂຶ້ນຕື່ມ ໂດຍສະເພາະແມ່ນການປະກອບ ແລະ ເກັບກຳເອກະສານ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຄື:

   3.1 ຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕ້ອງປະກອບເອກະສານ ດັ່ງນີ້:

   1) ໃບຄຳຮ້ອງ ຕາມແບບພິມທີ່ ກົມການຄ້າຕ່າງປະເທດ ໄດ້ກຳນົດ;
   2) ໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ ຫຼື ໃບຢັ້ງຢືນແຫຼ່ງທີ່ມາຂອງສິນຄ້າ ສະບັບສຳເນົາ;
   3) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ຕື່ມຂໍ້ມູນແລ້ວ;
   4) ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ສິນຄ້າສົ່ງອອກ (Export Invoice and Packing List);
   5) ໃບແຈ້ງພາສີເປັນລາຍລະອຽດ ແລະ ໃບຂົນສົ່ງສິນຄ້າ ໃນກໍລະນີທີ່ອອກ CO ແບບຍ້ອນຫຼັງ;

6) ໃນກໍລະນີອອກ CO ໃຫ້ກ່ອນ, ຜູ້ສົ່ງອອກຕ້ອງສະໜອງໃບແຈ້ງພາສີເປັນລາຍລະອຽດໃຫ້ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າ ພາຍໃນ 15 ວັນລັດຖະການ ນັບແຕ່ມື້ທີ່ສິນຄ້າໄດ້ອອກຈາກດ່ານ;

7) ໃນກໍລະນີອອກ CO ໃຫ້ກ່ອນ, ແຕ່ຜູ້ສົ່ງອອກບໍ່ໄດ້ນໍາໃຊ້ CO ດັ່ງກ່າວ ແມ່ນໃຫ້ຜູ້ສົ່ງອອກເອົາ CO ສະບັບແທ້ມາລຶບລ້າງນໍາ ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າ;

8) ສໍາລັບສິນຄ້າທີ່ຢູ່ໃນການຄຸ້ມຄອງຈາກຂະແໜງການກ່ຽວຂ້ອງ ກ່ອນການອອກ CO ຕ້ອງມີໃບອະນຸຍາດສົ່ງອອກສິນຄ້າດັ່ງກ່າວເສຍກ່ອນ.

ສໍາລັບເອກະສານສະບັບສໍາເນົາ ຕ້ອງໄດ້ເຊັນ ແລະ ຈໍ້າກາຮັບຮອງໂດຍ ຜູ້ຂໍການຢັ້ງຢືນແຫຼ່ງກໍາເນີດສິນຄ້າ.

3.2 ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າ ໃນຂອບເຂດທົ່ວປະເທດ ຕ້ອງເກັບສໍາເນົາເອກະສານປະກອບຂອງແຕ່ລະແບບຟອມໃຫ້ຖືກຕ້ອງ ແລະ ຄົບຖ້ວນ ໃນກໍລະນີເອກະສານປະກອບແບບຟອມບໍ່ຄົບ ຫຼື ຍັງບໍ່ໝົດອາຍຸການນໍາໃຊ້ ແມ່ນໃຫ້ປະຕິບັດ ດັ່ງນີ້:

1) ຖ້າຫາກແບບຟອມຊຸດໃດທີ່ເອກະສານປະກອບບໍ່ຄົບ ໂດຍສະເພາະແມ່ນໃບແຈ້ງພາສີເປັນລາຍລະອຽດຂາອອກ ແມ່ນໃຫ້ເຈົ້າໜ້າທີ່ ທີ່ອອກແບບຟອມດໍາເນີນການຍົກເລີກ ໂດຍການສົ່ງໜັງສືແຈ້ງມາຍັງ ກົມການຄ້າຕ່າງປະເທດ ເພື່ອຍົກເລີກຊຸດເອກະສານດັ່ງກ່າວ, ຊຶ່ງໃຫ້ລະບຸຊະນິດແບບຟອມ, ເລກທີແບບຟອມ, ວັນທີເດືອນປີ ແລະ ລາຍລະອຽດຕ່າງໆມາພ້ອມດ້ວຍ;

2) ສໍາລັບແບບຟອມຊຸດໃດທີ່ອອກກ່ອນໜ້ານີ້ທີ່ຍັງມີອາຍຸການນໍາໃຊ້ຢູ່ (ໃນໄລຍະເວລາ 03 ປີ) ແມ່ນໃຫ້ເຈົ້າໜ້າທີ່ດໍາເນີນການເກັບກໍາຄືນ ແລະ ລາຍງານວ່າມີແບບຟອມຈໍານວນຈັກຊຸດທີ່ມີເອກະສານປະກອບຄົບຖ້ວນ ແລະ ມີຈັກຊຸດທີ່ມີເອກະສານປະກອບບໍ່ຄົບຖ້ວນ (ໃຫ້ລະບຸຊະນິດແບບຟອມ, ເລກທີ, ວັນທີເດືອນປີ), ຫຼັງຈາກນັ້ນແມ່ນລາຍງານມາຍັງກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກໍາ ແລະ ການຄ້າ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້ຢ່າງພ້ອມພຽງກັນ ນັບຕັ້ງແຕ່ວັນທີ **01 ຕຸລາ 2025** ເປັນຕົ້ນໄປ. ຖ້າຫາກຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າໃດ ທີ່ບໍ່ສາມາດປະຕິບັດໄດ້ຕາມແຈ້ງການສະບັບນີ້ແມ່ນ ຈະໄດ້ເຮັດບົດບັນທຶກຕັກເຕືອນ ແລະ ຖ້າຍັງບໍ່ສາມາດແກ້ໄຂຂໍ້ບົກຜ່ອງທີ່ເກີດຂຶ້ນຕາມການປະເມີນຂອງກົມການຄ້າຕ່າງປະເທດ ແມ່ນຈະຖືກພິຈາລະນາຕັດສິດໃນການເປັນຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າ./

ຫົວໜ້າຫ້ອງການ

ປອ. ບົວວັນ ວິລະວົງ